ບໍລິສັດ ປິໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ
PETROLEUM TRADING LAO PUBLIC COMPANY
PetroTrade
ໜ່ວຍພັກ: ຫ້ອງການ, ບ້ານໂພນທັນ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ, ສ.ປ.ປ ລາວ ໂທ: 856 21 264834-5 ແຟັກ: 856021 264836
Kaisone Phomvihane Rd, Phonthan Village, Xaysettha District, Vientiane Capital, Lao P.D.R, Tel: 856 21 264834-5, Fax: 856021 264836

ເລກທີ: 0029 /ປທລ/2021

ນະຄອນຫຼວງວຽງຈັນ, ວັນທີ: 04 MAY 2021

ໜັງສືແຈ້ງເຊີນ

ຮຽນ: ທ່ານ ຜູ້ຖືຮຸ້ນ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ທີ່ນັບຖື.
ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020.

- ອີງຕາມ ກົດລະບຽບ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ສະບັບລົງວັນທີ 13 ຖລ 2014;
- ອີງຕາມ ມະຕິກອງປະຊຸມສະພາບໍລິຫານ ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ ຄັ້ງທີ 1/2021 ວັນທີ 16 ມີນາ 2021;
- ອີງຕາມ ໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບເລກທີ 0024/ ປທລ, ລົງວັນທີ 08 ເມສາ 2021;
- ອີງຕາມ ແຈ້ງການ ເລື່ອນວັນທີຈັດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020 ສະບັບເລກທີ 0027/ ປທລ, ລົງວັນທີ 26 ເມສາ 2021.

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (ບໍລິສັດ ຫຼື ປທລ) ຂໍຖືເປັນກຽດຮຽນເຊີນທ່ານ ຜູ້ຖືຮຸ້ນຂອງບໍລິສັດ ເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ຊຶ່ງຈະໄດ້ຈັດຂຶ້ນໃນວັນທີ **07 ພຶດສະພາ 2021,** ເວລາ **08:30** ໂມງ (ເລີ່ມລົງທະບຽນເວລາ **08:00** ໂມງ), ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 8, ອາຄານຕະຫຼາດຫຼັກຊັບລາວ, ຖະໜົນ ກຳແພງເມືອງ, ບ້ານ ໂພນທັນ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ ເພື່ອພິຈາລະນາ ແລະ ຄົບຮອງເອົາບັນຫາຕ່າງໆ ຕາມວາລະກອງປະຊຸມທີ່ໄດ້ແຈ້ງເປັນລາຍລັກອັກສອນໃນໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນກ່ອນໜ້ານີ້.

ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2020 ຜ່ານເວັບໄຊຂອງ ຕະຫຼາດ ຫຼັກຊັບລາວ (www.lsx.com.la)

ຫວັງຢ່າງຍິ່ງວ່າ ທ່ານຄົງຈະສະລະເວລາອັນມີຄ່າຂອງທ່ານເຂົ້າຮ່ວມປະຊຸມກັບພວກເຮົາໃນຄັ້ງນີ້ດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ
ຮອງປະທານສະພາບໍລິຫານ

ບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ Petroleum Trading Lao Public Company

ຈັນທະດອນ ເມກສະຫວັນ
Chanthadom MEKSAVANH